# ຖະແຫຼງການພະນົມເປັນກ່ຽວກັບການຮັບຮອງຖະແຫຼງການສິດທິມະນຸດອາຊຽນ

**ພວກເຮົາ,** ບັນດາປະມຸກລັດ/ຫົວໜ້າລັດຖະບານຂອງບັນດາປະເທດສະມາຊິກແຫ່ງສະມາຄົມບັນດາປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ), ໃນໂອກາດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 21 ທີ່ ພະນົມເປັນ, ປະເທດກຳປູເຈຍ;

**ໂດຍຢືນຢັນຄືນ** ຄວາມໝາຍໝັ້ນຂອງອາຊຽນ ໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ ແລະ ເສລີພາບພື້ນຖານ ກໍຄື ບັນດາຈຸດປະສົງ ແລະ ຫຼັກການທີ່ລະບຸໄວ້ໃນກົດບັດອາຊຽນ, ລວມທັງຫຼັກການປະຊາທິປະໄຕ, ລັດແຫ່ງກົດຫມາຍ ແລະ ການປົກຄອງທີ່ດີ;

**ໂດຍຢ້ຳຄືນເຖິງ** ຄວາມໝາຍໝັ້ນຂອງອາຊຽນ ແລະ ບັນດາປະເທດສະມາຊິກອາຊຽນ ຕໍ່ກົດບັດສະຫະປະຊາຊາດ, ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ, ຖະແຫຼງການ ແລະ ແຜນດຳເນີນງານກຸງວຽນ, ບັນດາສົນທິສັນຍາສາກົນດ້ານສິດທິມະນຸດ ເຊິ່ງບັນດາປະເທດສະມາຊິກອາຊຽນເປັນພາຄີ ແລະ ບັນດາຖະແຫຼງການ ແລະ ນິຕິກຳຂອງ ອາຊຽນ ທີ່ພົວພັນເຖິງສິດທິມະນຸດ;

**ໂດຍຮັບຮູ້** ຄວາມສຳຄັນຂອງບົດບາດຂອງຄະນະກຳມາທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ (AICHR) ໃນຖານະເປັນສະຖາບັນທີ່ມີຫນ້າທີ່ຮັບຜິດຊອບແບບກວມລວມໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດໃນອາຊຽນ, ຊຶ່ງປະກອບສ່ວນເຂົ້າໃນການສ້າງປະຊາຄົມອາຊຽນທີ່ແນໃສ່ປະຊາຊົນທັງເປັນພາຫະນະເພື່ອບັນລຸການພັດທະນາ ແລະ ຄວາມຍຸຕິທຳໃນສັງຄົມເທື່ອລະກ້າວ, ຮັບປະກັນກຽດສັກສີ ຂອງມະນຸດຢ່າງເຕັມສ່ວນ ແລະ ເຮັດໃຫ້ຄຸນນະພາບຊີວິດຂອງປະຊາຊົນໃນອາຊຽນສູງຂຶ້ນ;

**ໂດຍຊົມເຊີຍ** ຄະນະກຳມາທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍ ສິດທິມະນຸດ ໃນການຮ່າງຖະແຫຼງການສິດທິມະນຸດທີ່ກວມລວມໂດຍຜ່ານການປຶກສາຫາລືກັບບັນດາຂະແໜງການຂອງອາຊຽນ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆທີ່ກ່ຽວຂ້ອງ;

**ໂດຍຮັບຮູ້** ການປະກອບສ່ວນທີ່ມີຄວາມໝາຍຂອງບັນດາຂະແໜງການຂອງ ອາຊຽນ ແລະ ຜູ້ມີສ່ວນຮ່ວມອື່ນໆ ທີ່ກ່ຽວຂ້ອງໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດຢູ່ອາຊຽນ ແລະ ຊຸກຍູ້ໃຫ້ພາກສ່ວນດັ່ງກ່າວສືບຕໍ່ມີການຜູກພັນ ແລະ ການປຶກສາຫາລື ກັບ ຄະນະກຳມາທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ;

**ຈຶ່ງໄດ້ຕົກລົງກັນດັ່ງນີ້:**

1. **ຮັບຮອງເອົາ** ຖະແຫຼງການ ສິດທິມະນຸດອາຊຽນ;

2. **ຢືນຢັນ** ຄວາມໝາຍໝັ້ນຂອງພວກເຮົາ ໃນການຈັດຕັ້ງປະຕິບັດຖະແຫຼງການສິດທິມະນຸດອາຊຽນ ຢ່າງຄົບຖ້ວນ ເພື່ອເສີມຂະຫຍາຍການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ ຢູ່ໃນພາກພື້ນ; ແລະ

3. **ຢືນຢັນຄືນ** ຄວາມໝາຍໝັ້ນຂອງພວກເຮົາ ໃນການຮັບປະກັນໃຫ້ການຈັດຕັ້ງປະຕິບັດຖະແຫຼງການ ສິດທິມະນຸດ ອາຊຽນ ສອດຄ່ອງກັບຄວາມໝາຍໝັ້ນຂອງພວກເຮົາ ຕໍ່ກົດບັດສະຫະປະຊາຊາດ, ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ, ຖະແຫຼງການ ແລະ ແຜນດຳເນີນງານກຸງວຽນ, ບັນດາ ສົນທິສັນຍາສາກົນດ້ານສິດທິມະນຸດ ທີ່ບັນດາປະເທດສະມາຊິກອາຊຽນ ເປັນພາຄີ ກໍ່ຄືບັນດາ ຖະແຫຼງການ ແລະ ນິຕິກຳຂອງອາຊຽນ ທີ່ກ່ຽວຂ້ອງກັບສິດທິມະນຸດ.

**ເຮັດຂຶ້ນທີ່** ພະນົມເປັນ, ຣາຊະອານາຈັກກາປູເຈຍ, ວັນທີສິບແປດ ເດືອນພະຈິກ ປີສອງພັນສິບສອງ, ໂດຍ ເຮັດຕົ້ນສະບັບເປັນພາສາອັງກິດ.

# ຖະແຫລງການສິດທິມະນຸດອາຊຽນ

ພວກເຮົາ, ບັນດາປະມຸກລັດ/ຫົວໜ້າລັດຖະບານຂອງບັນດາປະເທດສະມາຊິກສະມາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ) ເຊິ່ງປະກອບດ້ວຍ ບຣູໄນ ດາຣຸສະລາມ, ຣາຊະອານາຈັກກຳປູເຈຍ, ສາທາລະນະລັດອິນໂດເນເຊຍ, ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ມາເລເຊຍ, ສາທາລະນະລັດສະຫະພາບມຽນມາ, ສາທາລະນະລັດຟີລິບປິນ, ສາທາລະນະລັດສິງກະໂປ, ຣາຊະອານາຈັກໄທ ແລະ ສາທາລະນະລັດສັງຄົມນິຍົມຫວຽດນາມ ໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 21 ທີ່ ພະນົມເປັນ, ກຳປູເຈຍ.

**ໂດຍຢືນຢັນຄືນ**ການຍຶດໝັ້ນຂອງພວກເຮົາຕໍ່ບັນດາຈຸດປະສົງ ແລະ ຫລັກການຂອງອາຊຽນ ຊຶ່ງໄດ້ລະບຸໄວ້ໃນກົດບັດອາຊຽນ, ໂດຍສະເພາະການເຄົາລົບ ແລະ ການສົ່ງເສີມ ແລະ ການປົກປ້ອງສິດທິມະນຸດ ແລະ ເສລີພາບພື້ນຖານ, ກໍຄື ບັນດາຫລັກການປະຊາທິປະໄຕ, ລັດແຫ່ງກົດໝາຍ ແລະ ການປົກຄອງທີ່ດີ;

**ໂດຍຢືນຢັນຄືນອີກ** ຄວາມໝາຍໝັ້ນຂອງພວກເຮົາຕໍ່ຖະແຫລງການສາກົນວ່າດ້ວຍສິດທິມະນຸດ, ກົດບັດສະຫະປະຊາຊາດ, ຖະແຫລງການ ແລະ ແຜນດຳເນີນງານກຸງວຽນ ແລະ ບັນດາສົນທິສັນຍາສາກົນດ້ານສິດທິມະນຸດຊຶ່ງປະເທດສະມາຊິກອາຊຽນເປັນພາຄີ;

**ໂດຍຢືນຢັນຄືນຕື່ມອີກ** ຄວາມໝາຍສຳຄັນຂອງຄວາມພະຍາຍາມຂອງອາຊຽນ ໃນການສົ່ງເສີມສິດທິມະນຸດໃນນັ້ນລວມມີຖະແຫລງການວ່າດ້ວຍຄວາມກ້າວໜ້າຂອງແມ່ຍິງໃນພາກພື້ນອາຊຽນ ແລະ ຖະແຫລງການວ່າດ້ວຍການລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃນພາກພື້ນອາຊຽນ;

**ໂດຍເຊື່ອໝັ້ນ** ວ່າຖະແຫລງການສະບັບນີ້ຈະຊ່ວຍສ້າງຂອບວຽກສໍາລັບການຮ່ວມມື ດ້ານສິດທິມະນຸດໃນພາກພື້ນ ແລະ ຈະປະກອບສ່ວນເຂົ້າໃນຂະບວນການສ້າງປະຊາຄົມອາຊຽນ;

**ຈຶ່ງຖະແຫຼງດັ່ງລຸ່ມນີ້:**

**ຫຼັກການທົ່ວໄປ**

1. ທຸກຄົນເກີດມາລ້ວນແຕ່ມີຄວາມເປັນອິດສະຫລະ ແລະ ສະເຫມີພາບໃນກຽດສັກສີ ແລະ ສິດທິ. ທຸກຄົນມີສະຕິສໍາປະສັນຍະ ແລະ ມະໂນທໍາ ແລະ ຄວນປະພຶດຕໍ່ກັນດ້ວຍນໍ້າໃຈມະນຸດສະທໍາ.

2. ທຸກຄົນມີສິດໄດ້ຊົມໃຊ້ສິດ ແລະ ເສລີພາບ ທີ່ໄດ້ລະບຸໄວ້ ໃນຖະແຫລງການສະບັບນີ້ໂດຍປາສະຈາກການຈໍາແນກທຸກຮູບແບບ ສະເພາະຢ່າງຍິ່ງການຈໍາແນກເຊື້ອຊາດ, ເພດ, ອາຍຸ, ພາສາ, ສາສະຫນາ, ຄໍາເຫັນດ້ານການເມືອງ ຫລື ຄໍາເຫັນອື່ນໆ, ສັນຊາດ ຫລື ສັງຄົມເດີມ, ຖານະດ້ານເສດຖະກິດ, ການເກີດ, ພິການ ຫລື ສະພາບອື່ນໆ.

3. ທຸກຄົນ ມີສິດຖືກຖືເປັນບຸກຄົນຕໍ່ຫນ້າກົດຫມາຍ. ທຸກຄົນມີຄວາມສະເຫມີພາບຕໍ່ຫນ້າກົດຫມາຍ ແລະ ມີສິດໄດ້ຮັບການປົກປ້ອງຈາກກົດຫມາຍຢ່າງເທົ່າທຽມກັນໂດຍປາສະຈາກການຈໍາແນກ.

4. ສິດທິຂອງແມ່ຍິງ, ເດັກນ້ອຍ, ຜູ້ສູງອາຍຸ, ຄົນພິການ, ແຮງງານເຄື່ອນຍ້າຍ ແລະ ກຸ່ມຄົນອ່ອນໄຫວ ແລະ ດ້ອຍໂອກາດ ເປັນສ່ວນປະກອບທີ່ບໍ່ສາມາດຕັດແຍກອອກຈາກສິດທິມະນຸດ ແລະ ເສລີພາບພື້ນຖານ.

5. ທຸກຄົນ ມີສິດໄດ້ຮັບການແກ້ໄຂຢ່າງມີປະສິດທິຜົນ ແລະ ບັງຄັບປະຕິບັດໄດ້ ໂດຍການຕັດສິນຂອງສານ ຫລື ອົງການອື່ນໆທີ່ມີສິດອຳນາດກ່ຽວຂ້ອງ ຕໍ່ການ ກະທຳທີ່ລະເມີດສິດທິຂອງບຸກຄົນນັ້ນຕາມລັດຖະທຳມະນູນ ຫລື ກົດໝາຍ.

6. ການຊົມໃຊ້ສິດທິມະນຸດ ແລະ ເສລີພາບພື້ນຖານຈະຕ້ອງກ້ຳເກິ່ງກັບການປະຕິ ບັດຫນ້າທີ່ທີ່ກ່ຽວຂ້ອງເພາະທຸກຄົນລ້ວນແຕ່ມີຄວາມຮັບຜິດຊອບຕໍ່ບຸກຄົນອື່ນ, ຊຸມຊົນ ແລະ ສັງຄົມທີ່ຕົນອາໄສຢູ່. ໃນທີ່ສຸດແລ້ວບັນດາປະເທດສະມາຊິກ ອາຊຽນມີຄວາມຮັບຜິດຊອບຕົ້ນຕໍໃນການສົ່ງເສີມ ແລະ ປົກປ້ອງ ສິດທິມະນຸດ ແລະ ເສລີພາບພື້ນຖານທັງຫມົດ.

7. ສິດທິມະນຸດທັງໝົດ ມີລັກສະນະຈັກກະວານ, ບໍ່ສາມາດແຍກອອກຈາກກັນ ໄດ້, ຂຶ້ນຕໍ່ກັນ ແລະ ພົວພັນເຊື່ອງກັນ ແລະ ກັນ. ທຸກໆສິດທິມະນຸດ ແລະ ເສລີ ພາບພື້ນຖານໃນຖະແຫລງການສະບັບນີ້ ຕ້ອງໄດ້ຮັບການປະຕິບັດຕໍ່ຢ່າງຍຸຕິທຳ ແລະ ສະເໝີພາບ ບົນພື້ນຖານເທົ່າທຽມ ແລະ ມີຄວາມສຳຄັນຄືກັນ. ໃນຂະນະ ດຽວກັນ, ການປະຕິບັດສິດທິມະນຸດ ຕ້ອງຖືກພິຈາລະນາໂດຍອີງໃສ່ສະພາບ ເງື່ອນໄຂຂອງພາກພື້ນ ແລະ ຂອງແຕ່ລະປະເທດ ໂດຍຄຳນຶງເຖິງຄວາມເປັນມາ ທີ່ແຕກຕ່າງກັນດ້ານການເມືອງ, ເສດຖະກິດ, ກົດໝາຍ, ສັງຄົມ, ວັດທະນະທຳ , ປະຫວັດສາດ ແລະ ສາດສະໜາ.

8. ສິດທິມະນຸດ ແລະ ເສລີພາບພື້ນຖານຂອງທຸກໆຄົນ ຈະຕ້ອງໄດ້ຮັບການປະຕິ ບັດໂດຍມີການເຄົາລົບສິດທິມະນຸດ ແລະ ເສລີພາບພື້ນຖານຂອງຄົນອື່ນ. ການ ປະຕິບັດສິດທິມະນຸດ ແລະ ເສລີພາບພື້ນຖານ ຈະຕ້ອງຢູ່ໃນຂອບເຂດທີ່ກົດໝ າຍກຳນົດໄວ້ເທົ່ານັ້ນ ໂດຍມີຈຸດປະສົງເພື່ອຮັບປະກັນການຮັບຮູ້ຕາມທາງຄວນຕໍ່ ສິດທິມະນຸດ ແລະ ເສລີພາບພື້ນຖານຂອງຄົນອື່ນ ແລະ ເພື່ອຄວາມຈຳເປັນ ທີ່ແທ້ຈິງຂອງການຮັກສາຄວາມໝັ້ນຄົງແຫ່ງຊາດ, ຄວາມເປັນລະບຽບຮຽບ ຮ້ອຍໃນສັງຄົມ, ສາທາລະນະສຸກ, ຄວາມປອດໄພທາງສັງຄົມ, ສິນລະທຳຂອງ ສັງຄົມ ກໍຄື ສະຫວັດດີການທົ່ວໄປຂອງປະຊາຊົນໃນສັງຄົມປະຊາທິປະໄຕ.

9. ໃນການປະຕິບັດສິດທິມະນຸດ ແລະ ເສລີພາບ ຕາມຖະແຫລງການສະບັບນີ້ ຄວນຍຶດຖືຕໍ່ຫລັກການບໍ່ລໍາອຽງ, ພາວະວິໃສ, ບໍ່ເລືອກປະຕິບັດ, ບໍ່ຈໍາແນກ, ບໍ່ປະເຊີນໜ້າ, ແລະ ບໍ່ໃຊ້ມາດຕະຖານສອງໜ້າ ແລະ ບໍ່ມີການເມືອງມາແຊກ ຄຸມ. ໃນການປະຕິບັດສິດທິມະນຸດ ແລະ ເສລີພາບຈະຕ້ອງຄໍານຶງເຖິງ ຫລັກການການມີສ່ວນຮ່ວມຂອງປະຊາຊົນ, ການບໍ່ຈໍາແນກ ແລະ ຄວາມຈໍາເປັນ ໃນການເອົາຄວາມຮັບຜິດຊອບ.

## ສິດທິພົນລະເມືອງ ແລະ ສິດທິດ້ານການເມືອງ

10. ບັນດາປະເທດສະມາຊິກອາຊຽນ ຢືນຢັນທຸກໆສິດທິພົນລະເມືອງ ແລະ ສິດທິ ດ້ານການເມືອງ ໃນຖະແຫລງການສາກົນວ່າດ້ວຍສິດທິມະນຸດ. ສະເພາະຢ່າງຍິ່ງ ບັນດາປະເທດສະມາຊິກອາຊຽນ ຢືນຢັນບັນດາສິດ ແລະ ເສລີພາບພື້ນຖານດັ່ງ ລຸ່ມນີ້:

11. ທຸກຄົນ ມີສິດມີຊີວິດໃນຖານະເປັນມະນຸດ ທີ່ຈະຕ້ອງຖືກປົກປ້ອງໂດຍກົດ ຫມາຍ. ຊີວິດຂອງບຸກຄົນໃດກໍຕາມຈະບໍ່ຖືກດັບມອດຢ່າງພາລະການ ຍົກເວັ້ນ ກໍລະນີທີ່ເປັນໄປຕາມຂະບວນການຂອງກົດຫມາຍ.

12. ທຸກຄົນ ມີອິດສະຫລະພາບ ແລະ ຄວາມປອດໄພສ່ວນບຸກຄົນ. ບໍ່ມີບຸກຄົນໃດ ຈະຖືກຈັບກຸມ, ກວດຄົ້ນ, ກັກຂັງ, ລັກພາຕົວ ຫລື ຖືກນໍາໃຊ້ຮູບແບບອື່ນຂອງ ການເສຍອິດສະຫລະພາບຢ່າງພາລະການ.

13. ບໍ່ມີບຸກຄົນໃດຈະຖືກເປັນທາດຮັບໃຊ້ ຫລື ຂ້າທາດ ໃນຮູບແບບໃດກໍຕາມ ຫລື ເປົ້າໝາຍຂອງການຄ້າມະນຸດລວມທັງເພື່ອຈຸດປະສົງການຄ້າອະໄວຍະວະ.

14. ບໍ່ມີບຸກຄົນໃດຈະຖືກທໍລະມານ ຫລື ລົງໂທດ ຫລື ປະຕິບັດຕໍ່ຢ່າງໂຫດຮ້າຍປ່າເຖື່ອນ, ໄຮ້ມະນຸດສະທຳ ຫລື ເສື່ອມຊາມ.

15. ທຸກຄົນ ມີສິດເສລີພາບໃນການສັນຈອນໄປມາ ແລະ ຕັ້ງຖິ່ນຖານຢູ່ພາຍໃນດິນແດນຂອງປະເທດ. ທຸກຄົນ ມີສິດເດີນທາງອອກຈາກປະເທດໃດກໍໄດ້, ນັບທັງປະເທດຕົນເອງ ແລະ ມີສິດກັບຄືນເຂົ້າປະເທດຕົນ.

16. ທຸກຄົນ ມີສິດຂໍລີ້ໄພ ແລະ ໄດ້ຮັບອະນຸຍາດໃຫ້ລີ້ໄພຢູ່ໃນປະເທດອື່ນອີງຕາມກົດຫມາຍຂອງປະເທດດັ່ງກ່າວ ແລະ ສົນທິສັນຍາສາກົນທີ່ມີຜົນບັງຄັບໃຊ້.

17. ທຸກຄົນ ມີສິດເປັນເຈົ້າຂອງ, ນຳໃຊ້, ຊື້ຂາຍ ແລະ ໂອນມອບຊັບສົມບັດຂອງຕົນທີ່ໄດ້ມາຢ່າງຖືກຕ້ອງຕາມກົດຫມາຍ ໂດຍຕົນເອງ ຫລື ຮ່ວມກັບບຸກຄົນອື່ນ. ຊັບສົມບັດຂອງບຸກຄົນໃດກໍຕາມ ຈະບໍ່ຖືກຍຶດໄປຢ່າງພາລະການ.

18. ທຸກຄົນມີສິດຖືສັນຊາດໃດຫນຶ່ງທີ່ກຳນົດໃນກົດຫມາຍ. ບໍ່ມີບຸກຄົນໃດຈະຖືກປົດສັນຊາດ ຫລື ປະຕິເສດສິດໃນການປ່ຽນແປງສັນຊາດຂອງຕົນຢ່າງພາລະການ.

19. ຄອບຄົວ ໃນຖານະເປັນອົງປະກອບທາງທຳມະຊາດ ແລະ ພື້ນຖານຂອງສັງຄົມ ມີສິດໄດ້ຮັບການປົກປ້ອງຈາກສັງຄົມ ແລະ ປະເທດສະມາຊິກອາຊຽນ. ຊາຍ ແລະ ຍິງ ທີ່ບັນລຸນິຕິພາວະ ມີສິດໃນການສົມລົດບົນພື້ນຖານຄວາມສະມັກໃຈ ແລະ ຄວາມເຫັນດີເຫັນພ້ອມຢ່າງເຕັມສ່ວນຂອງພວກກ່ຽວ, ໃນການສ້າງຄອບຄົວ ແລະ ໃນການຢ່າຮ້າງຕາມທີ່ກົດຫມາຍໄດ້ກຳນົດໄວ້.

20. (1) ທຸກຄົນ ທີ່ຖືກຂໍ້ຫາກະທຳຜິດທາງອາຍາ ຈະຕ້ອງຖືກສັນນິຖານ ເປັນຜູ້ບໍລິສຸດ ຈົນກວ່າຈະມີການພິສູດຄວາມຜິດຂອງຜູ້ກ່ຽວອີງຕາມກົດຫມາຍ ໃນຂະບວນການພິຈາລະນະຄະດີຢ່າງເປັນທຳ ແລະ ເປີດເຜີຍຂອງສານທີ່ມີສິດອຳ

ນາດ, ມີຄວາມເປັນເອກະລາດ ແລະ ບໍ່ລຳອຽງ ໃນນັ້ນຜູ້ຖືກກ່າວຫາຈະຕ້ອງໄດ້ຮັບການຄໍ້າປະກັນສິດສູ້ຄະດີ.

(2) ບໍ່ມີບຸກຄົນໃດ ຈະຖືກຕັດສິນມີຄວາມຜິດທາງອາຍາ ຍ້ອນການກະທຳ ຫລື ການລະເວັ້ນ ຊຶ່ງບໍ່ເປັນຄວາມຜິດທາງອາຍາ ຕາມກົດໝາຍພາຍໃນ ຫລື ກົດໝາຍສາກົນໃນເວລາກໍ່ການກະທຳນັ້ນ ແລະ ບໍ່ມີບຸກຄົນໃດ ຈະຖືກລົງໂທດໜັກກວ່າໂທດທີ່ກົດໝາຍກຳນົດໃສ່ຄວາມຜິດໃນເວລາກໍ່ການກະທຳຜິດນັ້ນ.

(3) ບໍ່ມີບຸກຄົນໃດຈະຖືກດຳເນີນຄະດີ ຫລື ລົງໂທດອີກຕໍ່ການກະທຳຜິດ ຊຶ່ງຜູ້ກ່ຽວໄດ້ຖືກສານຕັດສິນລົງໂທດ ຫລື ປ່ອຍຕົວແລ້ວໂດຍສອດຄ່ອງກັບກົດໝາຍ ແລະ ຂັ້ນຕອນການດຳເນີນຄະດີອາຍາ ຂອງແຕ່ລະປະເທດສະມາຊິກອາຊຽນ.

21. ທຸກຄົນ ມີສິດບໍ່ຖືກແຊກແຊງເຂົ້າຊີວິດສ່ວນຕົວ, ຄອບຄົວ, ລ່ວງລໍ້າເຮືອນຊານ ຫລື ການຕິດຕໍ່ສື່ສານ ລວມທັງ ຂໍ້ມູນສ່ວນຕົວ ຫລື ຖືກລົບລູ່ກຽດ ແລະ ຊື່ສຽງຂອງຕົນ. ທຸກຄົນ ມີສິດໄດ້ຮັບການປົກປ້ອງໂດຍກົດໝາຍຈາກການແຊກແຊງ, ລ່ວງລໍ້າ ຫລື ລົບລູ່ດັ່ງກ່າວ.

22. ທຸກຄົນມີສິດເສລີພາບໃນການນຶກຄິດ, ມະໂນທຳ ແລະ ສາສະໜາ. ທຸກຮູບການບໍ່ອົດກັ້ນ, ການຈຳແນກ ແລະ ການຍຸຍົງໃຫ້ມີຄວາມກຽດຊັງບົນພື້ນຖານສາສະໜາ ແລະ ຄວາມເຊື່ອຖື ຈະຕ້ອງຖືກລົບລ້າງ.

23. ທຸກຄົນ ມີສິດເສລີພາບໃນການຄິດເຫັນ ແລະ ສະແດງຄວາມຄິດເຫັນ ລວມທັງເສລີພາບໃນການຍຶດຖືຄວາມຄິດເຫັນ ໂດຍປາສະຈາກການແຊກແຊງ ແລະ ໃນການຊອກຫາ, ໄດ້ຮັບ ແລະ ເຜີຍແຜ່ ຂໍ້ມູນຂ່າວສານບໍ່ວ່າທາງປາກເປົ່າ, ເປັນລາຍລັກອັກສອນ ຫຼື ຜ່ານວິທີທາງອື່ນໃດໜຶ່ງທີ່ບຸກຄົນນັ້ນເລືອກ.

24. ທຸກຄົນມີສິດເສລີພາບໃນການໂຮມຊຸມນຸມໂດຍສັນຕິ

25. (1) ທຸກຄົນທີ່ເປັນພົນລະເມືອງຂອງປະເທດ ມີສິດເຂົ້າຮ່ວມວຽກງານລັດຖະການຂອງປະເທດຕົນໂດຍກົງ ຫລື ທາງອ້ອມ ໂດຍຜ່ານຕົວແທນທີ່ມາຈາກການເລືອກຕັ້ງຢ່າງມີປະຊາທິປະໄຕ ໂດຍສອດຄ່ອງກັບກົດໝາຍແຫ່ງຊາດຂອງປະເທດ.

(2) ພົນລະເມືອງທຸກຄົນ ມີສິດລົງຄະແນນສຽງໃນການເລືອກຕັ້ງແຕ່ລະໄລຍະ ແລະ ການເລືອກຕັ້ງຕົວຈິງ ຊຶ່ງການເລືອກຕັ້ງນັ້ນຄວນຈະຕ້ອງມີຂຶ້ນບົນພື້ນຖານຫລັກການທົ່ວໄປ, ສະເຫມີພາບ ແລະ ລົງຄະແນນສຽງປິດລັບ ແລະ ຮັບປະກັນໃຫ້ມີການສະແດງເຈດຈຳນົງຂອງຜູ້ປ່ອນບັດເລືອກຕັ້ງຢ່າງອິດສະຫລະ ໂດຍສອດຄ່ອງກັບກົດໝາຍແຫ່ງຊາດຂອງປະເທດ.

**ສິດທິດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ**

26. ບັນດາປະເທດສະມາຊິກອາຊຽນ ຢືນຢັນທຸກໆສິດທິດ້ານເສດຖະກິດສັງຄົມ , ແລະ ວັດທະນະທຳ ທີ່ລະບຸໄວ້ໃນຖະແຫຼງການສາກົນວ່າດ້ວຍສິດທິມະນຸດ. ສະເພາະຢ່າງຍິ່ງ ບັນດາປະເທດສະມາຊິກອາຊຽນ ຢືນຢັນດັ່ງລຸ່ມນີ້:

27. (1) ທຸກຄົນມີສິດໃນການເຮັດວຽກ, ໃນການເລືອກວຽກເຮັດງານທຳຢ່າງມີອິດສະຫລະໃນເງື່ອນໄຂການເຮັດວຽກທີ່ເປັນທຳ, ເໝາະສົມ ແລະ ເອື້ອອຳນວຍ ພ້ອມທັງ ມີສິດເຂົ້າເຖິງແຜນການຊ່ວຍເຫຼືອສຳລັບຜູ້ຫວ່າງງານ.

(2) ທຸກຄົນມີສິດສ້າງຕັ້ງອົງການກຳມະບານ ແລະ ເຂົ້າຮ່ວມໃນອົງການກຳມະບານ ທີ່ຕົນເລືອກ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນ ອີງຕາມກົດໝາຍ ແລະ ລະບຽບການພາຍໃນປະເທດ.

(3) ເດັກນ້ອຍ ຫຼື ຊາວໜຸ່ມຈະບໍ່ຖືກຂູດຮີດທາງເສດຖະກິດ ແລະ ສັງຄົມ . ຜູ້ວ່າຈ້າງເດັກນ້ອຍ ແລະ ຊາວໜຸ່ມ ເຂົ້າເຮັດວຽກທີ່ມີຜົນຕໍ່ຈິດໃຈ ຫຼື ສຸຂະພາບ, ເປັນອັນຕະລາຍຕໍ່ຊີວິດ ຫຼື ເປັນການກີດຂວາງການພັດທະນາແບບປົກກະຕິ ລວມທັງການສຶກສາຂອງເຂົາເຈົ້າ ຄວນຖືກລົງໂທດຕາມກົດໝາຍ . ບັນດາປະເທດສະມາຊິກອາຊຽນ ຄວນວາງຂອບເຂດອາຍຸການຈ້າງງານເພື່ອຫ້າມ ແລະ ລົງໂທດການຈ້າງງານຕ່ຳກວ່າອາຍຸທີ່ກຳນົດຕາມກົດໝາຍ.

28. ທຸກຄົນມີສິດໄດ້ຮັບມາດຕະຖານການດຳລົງຊີວິດທີ່ພຽງພໍສຳລັບຕົນເອງ ແລະ ຄອບຄົວ ເຊິ່ງປະກອບດ້ວຍ:

ກເສລີພາບຈາກຄວາມ ,ສິດມີອາຫານທີ່ພຽງພໍ ແລະ ສາມາດຈ່າຍໄດ້ .

ອຶດຫິວ ແລະ ໄດ້ຮັບອາຫານທີ່ປອດໄພ ແລະ ມີໂພຊະນາການ;

ຂ .ສິດມີເຄື່ອງນຸ່ງຫົ່ມ;

ຄ ;ສິດມີທີ່ຢູ່ອາໄສທີ່ພຽງພໍ ແລະ ສາມາດຈ່າຍໄດ້ .

ງສິດໄດ້ຮັບການປິ່ນ .ປົວ ແລະ ການບໍລິການທາງສັງຄົມທີ່ຈຳເປັນ;

ຈ;ສິດມີນ້ຳດື່ມທີ່ປອດໄພ ແລະ ສຸຂະອະນາໄມ .

ສ ສະອາດ ແລະ ,ສິດມີສະພາບແວດລ້ອມທີ່ປອດໄພ .ຍືນຍົງ.

29. (1) ທຸກຄົນມີສິດໄດ້ຮັບມາດຕະຖານດ້ານສຸຂະພາບສູງສຸດເທົ່າທີ່ເປັນໄປໄດ້ທາງກາຍການບໍລິການ ,ຈິດໃຈ ແລະ ຈະເລີນພັນ ,ປິ່ນປົວສຸຂະພາບຂັ້ນພື້ນຖານ ແລະ ສາມາດຈ່າຍໄດ້ແລະ ສາມາດເຂົ້າເຖິງສິ່ງອຳນວຍຄວາມ , .ສະດວກດ້ານການແພດ

(2) ປະເທດສະມາຊິກອາຊຽນ ຄວນສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ເພື່ອແກ້ໄຂຄວາມອະຄະຕິ ,ການບໍ່ຫົວຊາ, ການປະຕິເສດ ແລະ ການຈໍາແນກ ໃນການສະກັດກັ້ນ ເບິ່ງແຍງ ແລະ ,ປິ່ນປົວ ,ຊ່ວຍເຫລືອຜູ້ທີ່ມີພະຍາດຕິດຕໍ່ , ລວມທັງເຊື້ອພະຍາດເອສອາຍວີ/ເອດສ (HIV/AIDS).

30. (1) ທຸກຄົນມີສິດໄດ້ຮັບສະຫວັດດີການສັງຄົມລວມທັງການປະກັນ ,ສັງຄົມ ຖ້າມີ ,ເຊິ່ງຈະຊ່ວຍໃຫ້ເຂົາເຈົ້າ ມີຊ່ອງທາງໃນການດໍາລົງຊີວິດດ້ວຍສັກສີ ແລະ ເໝາະສົມ.

(2) ຜູ້ເປັນແມ່ຄວນໄດ້ຮັບການປົກປ້ອງເປັນພິເສດ ໃນໄລຍະເວລາອັນສົມເຫດ ສົມຜົນ ກ່ອນ ແລະ ຫຼັງຈາກການຄອດລູກ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການພາຍໃນປະເທດ. ໃນຊ່ວງໄລຍະເວລາດັ່ງກ່າວ ແມ່ທີ່ເຮັດວຽກ , ຄວນໄດ້ຮັບອະນຸຍາດໃຫ້ພັກວຽກໂດຍບໍ່ຕັດເງິນເດືອນ ຫຼື ພັກວຽກ ໂດຍໄດ້ ຮັບ ຜົນປະໂຫຍດຈາກການປະກັນສັງຄົມທີ່ພຽງພໍ.

(3) ແມ່ ແລະ ເດັກນ້ອຍ ຄວນໄດ້ຮັບການເບິ່ງແຍງ ແລະ ການຊ່ວຍເຫຼືອເປັນ ພິເສດເດັກນ້ອຍທຸກຄົນ .ບໍ່ວ່າຈະເກີດຢູ່ໃນ ຫຼື ນອກສົມລົດ ຄວນໄດ້ຮັບການ ປົກປ້ອງທາງສັງຄົມໃນລັກສະນະດຽວກັນ.

31. (1) ທຸກຄົນມີສິດໃນການສຶກສາ.

(2) ການສຶກສາຊັ້ນປະຖົມ ຄວນເປັນພາກບັງຄັບ ແລະ ມີສະໜອງໃຫ້ ໂດຍບໍ່ ເສຍຄ່າ ສໍາລັບ ໝົດທຸກຄົນ .ຄວນມີການສຶກສາຊັ້ນມັດທະຍົມ ໃນຮູບແບບ ຕ່າງໆ ແລະ ສາມາດເຂົ້າເຖິງໄດ້ສໍາລັບໝົດທຸກຄົນ ໂດຍນໍາໃຊ້ທຸກວິທີການທີ່ ເໝາະສົມການສຶກສາດ້ານເຕັກນິກ ແລະ . ວິຊາຊີບ ໂດຍທົ່ວໄປແລ້ວຄວນ ສາມາດເຂົ້າເຖິງໄດ້ສໍາລັບທຸກຄົນ. ການສຶກສາຊັ້ນສູງກໍຄວນໃຫ້ທຸກຄົນສາມາດ ເຂົ້າເຖິງຢ່າງສະເໝີພາບໂດຍອີງໃສ່ຄວາມສາມາດຕົວຈິງ.

(3) ການສຶກສາ ຄວນນໍາໄປສູ່ການພັດທະນາຢ່າງເຕັມສ່ວນດ້ານບຸກຄະລິກພາບ ແລະ ກຽດສັກສີຂອງມະນຸດ ການສຶກສາ .ຄວນສ້າງຄວາມເຂັ້ມແຂງໃຫ້ແກ່ການເຄົາລົບສິດທິມະນຸດ ແລະ ເສລີພາບພື້ນຖານ ຢູ່ໃນປະເທດສະມາຊິກອາຊຽນ . ການສຶກສາ ຄວນເຮັດໃຫ້ທຸກຄົນສາມາດ ,ນອກຈາກນີ້ເຂົ້າຮ່ວມຢ່າງມີປະສິດທິພາບໃນສັງຄົມຂອງຕົນສົ່ງເສີມຄວາມ ,ເຂົ້າອົກເຂົ້າໃຈຄວາມອົດກັ້ນ ແລະ , ມິດຕະພາບລະຫວ່າງປະຊາຊາດເຊື້ອຊາດ ແລະ ສາ ,ສະໜາແລະ ເສີມ , ຂະຫຍາຍການເຄື່ອນໄຫວຂອງອາຊຽນ ໃນການຮັກສາສັນຕິພາບ.

32. ທຸກຄົນມີສິດໂດຍຕົນເອງ ຫຼື ຮ່ວມກັບຄົນອື່ນ ເຂົ້າຮ່ວມຢ່າງມີອິດສະຫລະໃນຊີວິດວັດທະນະທໍາຊຶມໃຊ້ສິນລະປະ ແລະ ຜົນປະໂຫຍດຈາກຄວາມກ້າວໜ້າ , ຂອງວິທະຍາສາດ ກໍຄື ການນໍາໃຊ້ຄວາມກ້າວໜ້າດັ່ງກ່າວ ແລະ ໄດ້ຮັບການປົກປ້ອງຜົນປະໂຫຍດທາງຈິດໃຈ ແລະ ວັດຖຸ ທີ່ເກີດຈາກຜົນງານທາງດ້ານວິທະຍາສາດວັນນະກໍາ ຫຼື ສິລະປະ ,ທີ່ເຫມາະສົມເຊິ່ງບຸກຄົນນັ້ນເປັນຜູ້ສ້າງຂຶ້ນ.

33. ບັນດາປະເທດສະມາຊິກອາຊຽນ ຄວນເອົາມາດຕະການໂດຍຕົນເອງ ແລະ ຜ່ານການຮ່ວມມື ແລະ ການຊ່ວຍເຫຼືອໃນລະດັບພາກພື້ນ ແລະ ສາກົນໂດຍສະເພາະທາງດ້ານເສດຖະກິດ ແລະ ວິຊາການ, ເພື່ອນໍາໃຊ້ຊັບພະຍາກອນທີ່ຕົນມີໃນລະດັບສູງສຸດເພື່ອຈັດຕັ້ງປະຕິບັດສິດທິດ້ານເສດຖະກິດສັງຄົມ ແລະ ວັດທະ , ນະທໍາ ທີ່ຖືກຮັບຮູ້ຢູ່ໃນຖະແຫຼງການສະບັບນີ້ເທື່ອລະກ້າວ.

34. ບັນດາປະເທດສະມາຊິກອາຊຽນ ອາດກໍານົດຂອບເຂດ ທີ່ຕົນຈະຄໍ້າປະກັນສິດທິດ້ານເສດຖະກິດ ແລະ ສັງຄົມ ທີ່ກໍານົດຢູ່ໃນຖະແຫຼງການສະບັບນີ້ ໃຫ້ແກ່ຜູ້ທີ່ບໍ່ເປັນພົນລະເມືອງຂອງຕົນ ໂດຍຄໍານຶງເຖິງ ສິດທິມະນຸດ ແລະ ໂຄງສ້າງ ແລະ ຊັບພະຍາກອນດ້ານເສດຖະກິດແຫ່ງຊາດ ຂອງແຕ່ລະປະເທດສະມາຊິກ.

## ສິດທິໃນການພັດທະນາ

35. ສິດໃນການພັດທະນາ ແມ່ນສິດທິມະນຸດ ທີ່ບໍ່ສາມາດຕັດແຍກອອກໄດ້ ຊຶ່ງມະນຸດທຸກຄົນ ແລະ ປະຊາຊົນໃນອາຊຽນ ມີສິດເຂົ້າຮ່ວມປະກອບສ່ວນ ແລະ ,

ໄດ້ຮັບຜົນປະໂຫຍດຢ່າງເປັນທຳ ແລະ ຍືນຍົງ ຈາກການພັດທະນາທາງດ້ານເສດຖະກິດສິດ .ສັງຄົມ ແລະ ວັດທະນະທຳ ແລະ ການເມືອງ ,ທີ່ໃນການພັດທະນາຄວນໄດ້ຮັບການຈັດຕັ້ງປະຕິບັດ ເພື່ອຕອບສະໜອງຄວາມຈຳເປັນດ້ານການພັດທະນາ ແລະ ການຮັກສາສິ່ງແວດລ້ອມ ສຳລັບຄົນລຸ້ນປັດຈຸບັນ ແລະ ລຸ້ນຕໍ່ໆໄປຢ່າງສະເໝີພາບ. ໃນຂະນະທີ່ການພັດທະນາອຳນວຍຄວາມສະດວກ ແລະ ຈຳເປັນສຳລັບການໄດ້ຮັບທຸກໆສິດທິມະນຸດການ ,ຂາດການພັດທະນາ ບໍ່ອາດຖືເປັນຂໍ້ອ້າງສຳລັບການລະເມີດສິດທິມະນຸດ ທີ່ຖືກຮັບຮູ້ໃນລະດັບສາກົນ.

36. ບັນດາປະເທດສະມາຊິກອາຊຽນ ຄວນຮັບຮອງເອົາແຜນພັດທະນາທີ່ແນໃສ່ປະຊາຊົນ ແລະ ຕອບສະໜອງດ້ານບົດບາດຍິງຊາຍ ເພື່ອລຶບລ້າງຄວາມທຸກຍາກສ້າງເງື່ອນໄຂຕ່າງໆ ລວມທັງການປົກ ,ປັກຮັກສາ ແລະ ຄວາມຍືນຍົງຂອງສິ່ງແວດ ລ້ອມເພື່ອໃຫ້ປະຊາຊົນໃນອາຊຽນ ໄດ້ຮັບສິດທິມະນຸດທັງຫມົດ ທີ່ຖືກຮັບຮູ້ໃນຖະແຫຼງການສະບັບນີ້ ບົນພື້ນຖານຄວາມສະເໝີພາບ ແລະ ເພື່ອຫລຸດຜ່ອນຄວາມແຕກໂຕນດ້ານການພັດທະນາ ພາຍໃນອາຊຽນ ເທື່ອລະກ້າວ.

37. ບັນດາປະເທດສະມາຊິກອາຊຽນ ຮັບຮູ້ວ່າການຈັດຕັ້ງປະຕິບັດສິດທິໃນການພັດທະນາ ຈຳເປັນຕ້ອງມີນະໂຍບາຍການພັດທະນາທີ່ມີປະສິດທິພາບໃນລະດັບຊາດ ແລະ ການພົວພັນເສດຖະກິດການຮ່ວມມືສາກົນ ,ທີ່ສະເໝີພາບ ແລະສະພາບແວດລ້ອມເສດຖະກິດສາກົນທີ່ເອື້ອອຳນວຍ .ບັນດາປະເທດສະມາຊິກອາຊຽນ ຄວນເຊື່ອມສານສິດທິໃນການພັດທະນາທີ່ມີຫຼາຍແງ່ມຸມ ເຂົ້າໃນຂົງເຂດທີ່ກ່ຽວຂ້ອງຂອງການສ້າງປະຊາຄົມອາຊຽນ ແລະ ພາຍຫຼັງການສ້າງປະຊາຄົມອາຊຽນແລະ ຄວນຮ່ວມ ,ມືກັບອົງຄະນາຍາດສາກົນໃນການສົ່ງເສີມການພັດທະນາທີ່ເປັນທຳ ແລະ ຍືນຍົງ, ການພົວພັນດ້ານການຄ້າທີ່ສະເໝີພາບ ແລະການຮ່ວມມືສາກົນທີ່ມີປະສິດທິພາບ.

## ສິດໃນສັນຕິພາບ

38. ທຸກຄົນ ແລະ ປະຊາຊົນໃນອາຊຽນ ມີສິດໃນສັນຕິພາບພາຍໃຕ້ຂອບແຫ່ງຄວາມໝັ້ນຄົງ ແລະ ສະຖຽນລະພາບເປັນກາງ ແລະ ເສລີພາບ , ຂອງອາຊຽນ ເພື່ອເຮັດໃຫ້ສິດທິຕ່າງໆໃນຖະແຫຼງການສະບັບນີ້ ສາມາດບັນລຸຜົນໄດ້ຢ່າງເຕັມສ່ວນ. ເພື່ອຈຸດປະສົງດັ່ງກ່າວ, ບັນດາປະເທດສະມາຊິກອາຊຽນ ຄວນສືບຕໍ່ຮັດແໜ້ນມິດຕະພາບ ແລະ ການຮ່ວມມືໃນການສືບຕໍ່ເສີມຂະຫຍາຍສັນຕິພາບ ,ຄວາມກົມກຽວ ແລະ ສະຖຽນລະພາບໃນພາກພື້ນ.

## ການຮ່ວມມືໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ

39. ບັນດາປະເທດສະມາຊິກອາຊຽນ ມີຜົນປະໂຫຍດ ແລະ ຄວາມໝາຍໝັ້ນຮ່ວມກັນ ໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ ແລະ ເສລີພາບພື້ນຖານ ຊຶ່ງຈະຕ້ອງບັນລຸໃຫ້ເປັນຮູບປະທຳໂດຍຜ່ານການຮ່ວມມືລະຫວ່າງປະເທດສະມາຊິກອາຊຽນດ້ວຍກັນ ແລະ ການຮ່ວມມືກັບບັນດາສະຖາບັນ/ອົງການຈັດຕັ້ງລະດັບຊາດ, ພາກພື້ນ ແລະ ສາກົນ ໂດຍສອດຄ່ອງກັບກົດບັດອາຊຽນ.

40. ບໍ່ມີຂໍ້ບັນຍັດໃດໃນຖະແຫຼງການສະບັບນີ້ ທີ່ອາດຖືກຕີຄວາມໝາຍໄປໃນທາງທີ່ໃຫ້ສິດແກ່ ລັດໃດໜຶ່ງກຸ່ມຄົນໃດໜຶ່ງ ຫຼື ບຸກຄົນໃດ ,ຫນຶ່ງ ໃນການກະທຳ ທີ່ແນໃສ່ຫລຸດຄຸນຄ່າຂອງບັນດາຈຸດປະສົງ ແລະ ຫຼັກການຂອງອາຊຽນ ຫຼື ທຳລາຍສິດ ແລະ ເສລີພາບພື້ນຖານໃດຫນຶ່ງ ໃນຖະແຫຼງການສະບັບນີ້ ກໍຄື ບັນດາສົນທິສັນຍາສາກົນດ້ານສິດທິມະນຸດ ທີ່ປະເທດສະມາຊິກອາຊຽນ ເປັນພາຄີ.

ຮັບຮອງເອົາໂດຍປະມຸກລັດ/ຫົວໜ້າລັດຖະບານຂອງບັນດາປະເທດສະມາຊິກອາຊຽນ ທີ່ ນະຄອນຫລວງພະນົມເປັນ, ກຳປູເຈຍ, ໃນວັນທີສິບແປດ ເດືອນພະຈິກ ປີສອງພັນສິບສອງ ໂດຍເຮັດເປັນຕົ້ນສະບັບດຽວເປັນພາສາອັງກິດ.